ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ເລກທີ 0212/ກຄພນ

ນະຄອນຫຼວງວຽງຈັນ, ວັນທີ 26 ກຸມພາ 2025

# ແຈ້ງການ

**ເຖິງ:** - ພະແນກອຸດສາຫະກຳ ແລະ ການຄ້າ ແຂວງ, ນະຄອນຫຼວງວຽງຈັນ.

- ສະມາຄົມນ້ຳມັນເຊື້ອໄຟ ແລະ ອາຍແກັດ ລາວ, ບັນດາບໍລິສັດນ້ຳມັນເຊື້ອໄຟ ແລະ ປ້ຳຂາຍຍ່ອຍນ້ຳມັນເຊື້ອໄຟ.

**ເລື່ອງ:** ປັບລົງລາຄານ້ຳມັນເຊື້ອໄຟໃນຂອບເຂດທົ່ວປະເທດ.

- ອີງຕາມ ດຳລັດວ່າດ້ວຍ ກອງທຶນນ້ຳມັນເຊື້ອໄຟສະບັບເລກທີ 83/ລບ, ລົງວັນທີ 16 ມັງກອນ 2024.
- ອີງຕາມ ທິດຊີ້ນຳຂອງຄະນະນຳ ກະຊວງ ອຸດສາຫະກຳ ແລະ ການຄ້າ ຄັ້ງວັນທີ 26 ກຸມພາ 2025.
- ອີງຕາມ ສະພາບການເໜັງຕີງຂຶ້ນ-ລົງລາຄານ້ຳມັນເຊື້ອໄຟ ໃນຕະຫຼາດໂລກ ແລະ ໃນຂົງເຂດ.

ເພື່ອເຮັດໃຫ້ການປັບລາຄານ້ຳມັນເຊື້ອໄຟ ພາຍໃນປະເທດ ຂຶ້ນ-ລົງ ຕາມການເໜັງຕີງຂອງຕະຫຼາດໂລກ ທັງນີ້ ກໍເພື່ອຮັບປະກັນການສະໜອງນ້ຳມັນເຊື້ອໄຟ ໃຫ້ເປັນປົກກະຕິ.

**ກົມການຄ້າພາຍໃນ, ກະຊວງອຸດສາຫະກຳ ແລະ ການຄ້າ ຈຶ່ງໄດ້ອອກແຈ້ງການ ເຖິງທ່ານຊາບ ແລະ ປະຕິບັດດັ່ງນີ້:**

1. ປັບລົງລາຄານ້ຳມັນເຊື້ອໄຟທຸກຊະນິດ ຄື: ນ້ຳມັນແອັດຊັງພິເສດ ປັບລົງ 360 ກີບ/ລິດ, ນ້ຳມັນແອັດຊັງທຳມະດາ ປັບລົງ 280 ກີບ/ລິດ ແລະ ນ້ຳມັນກາຊວນ ປັບລົງ 140 ກີບ/ລິດ.
   ລາຄາຕາມຕາຕະລາງລຸ່ມນີ້ ແມ່ນລາຄາຈຸດນະຄອນຫຼວງວຽງຈັນ:

| ລ/ດ | ຊະນິດ | ລາຄາຂາຍຍ່ອຍ | | ເພີ່ມ/ຫຼຸດ | | ໝາຍເຫດ |
|---|---|---|---|---|---|---|
| | | ຫຼ້າສຸດ | ໃໝ່ | | | |
| | | ກີບ | ກີບ | ກີບ | % | |
| 1 | ອຊ ພິເສດ | 30,010 | 29,650 | -360 | 1.20 | |
| 2 | ອຊ ທຳມະດາ | 23,620 | 23,340 | -280 | 1.19 | |
| 3 | ກາຊວນ | 19,510 | 19,370 | -140 | 0.72 | |

(ສຳລັບລາຄາຂາຍຍ່ອຍເຂດພາກສະພາບແຂວງ ແມ່ນມີເອກະສານຊ້ອນທ້າຍ).

2. ລາຄາໃໝ່ນີ້ແມ່ນໃຫ້ເລີ່ມປະຕິບັດ ວັນທີ 27 ກຸມພາ 2025, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ.
3. ການຄິດໄລ່ພັນທະ ແລະ ຄ່າທຳນຽມຕ່າງໆ ແມ່ນໃຫ້ພາກສ່ວນກ່ຽວຂ້ອງ ຄິດໄລ່ເກັບຕາມທີ່ໄດ້ກຳນົດໄວ້ ໃນໂຄງປະກອບລາຄານ້ຳມັນເຊື້ອໄຟ ສະບັບເລກທີ 0211/ກຄພນ, ລົງວັນທີ 26 ກຸມພາ 2025 ຈົນກວ່າຈະມີການປ່ຽນແປງ.

4. ໃຫ້ບັນດາບໍລິສັດນ້ຳມັນເຊື້ອໄຟ ປະຕິບັດຕາມເນື້ອໃນຂ້າງເທິງນີ້ຢ່າງເຂັ້ມງວດ ແລະ ຄຸ້ມຄອງປ້ຳຂາຍຍ່ອຍຂອງຕົນ ໃຫ້ບໍລິການຢ່າງເປັນປົກກະຕິ.
5. ໃຫ້ພະແນກ ອຄ ແຂວງ, ນະຄອນຫຼວງວຽງຈັນ ຊີ້ນຳຫ້ອງການອຸດສາຫະກຳ ແລະ ການຄ້າເມືອງ, ນະຄອນ ລົງຕິດຕາມ,ກວດກາການຈັດຕັ້ງປະຕິບັດລາຄາໃໝ່ນີ້ຂອງປ້ຳນ້ຳມັນເຊື້ອໄຟໃນຂອບເຂດຄວາມຮັບຜິດຊອບຂອງຕົນ ເປັນປົກກະຕິ, ຫາກພົບເຫັນ ປ້ຳໃດບໍ່ປະຕິບັດຕາມລາຄາໃໝ່ນີ້ ໃຫ້ນຳໃຊ້ມາດຕະການຕ່າງໆ ຕາມລະບຽບການໃນຂອບເຂດຄວາມຮັບຜິດຊອບຂອງຕົນ.
6. ແຈ້ງການສະບັບນີ້ ປ່ຽນແທນແຈ້ງການ ສະບັບເລກທີ 0191/ກຄພນ, ລົງວັນທີ 19 ກຸມພາ 2025.

ດັ່ງນັ້ນ, ຈຶ່ງແຈ້ງມາຍັງທ່ານເພື່ອຊາບ ແລະ ຈັດຕັ້ງປະຕິບັດ.

ຫົວໜ້າກົມ

ສັນຕິສຸກ ພູນສະຫວັດ

<u>ບ່ອນສົ່ງ:</u>

- ຫ້ອງວ່າການສູນກາງພັກ (ໃຊ້ຕາງລາຍງານ).
- ຫ້ອງວ່າການສຳນັກງານນາຍົກລັດຖະມົນຕີ (ໃຊ້ຕາງລາຍງານ).
- ຫ້ອງການ ກະຊວງການເງິນ (ເພື່ອຊາບ).
- ທ່ານຜູ້ວ່າການທະນາຄານແຫ່ງ ສປປ ລາວ (ເພື່ອຊາບ).
- ກົມພາສີ ແລະ ກົມສ່ວຍສາອາກອນ ກະຊວງການເງິນ (ເພື່ອເປັນບ່ອນອີງ).
- ກົມຂົນສົ່ງ, ກະຊວງ ໂຍທາທິການ ແລະຂົນສົ່ງ (ເພື່ອຊາບ).
- ຄະນະກຳມະການຄຸ້ມຄອງຕະຫຼາດຫຼັກຊັບ (ເພື່ອຊາບ).
- ພະແນກອຸດສາຫະກຳ ແລະ ການຄ້າແຂວງ, ນະຄອນຫຼວງວຽງຈັນ (ເພື່ອຕິດຕາມ).

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ກະຊວງອຸດສາຫະກຳ ແລະ ການຄ້າ

ກົມການຄ້າພາຍໃນ

ລາຄາຂາຍຍ່ອຍໜ້າປ້ຳນ້ຳມັນເຊື້ອໄຟ ໃໝ່ ໃນເຂດເທດສະບານແຂວງ, ນະຄອນຫຼວງວຽງຈັນ ເລີ່ມປະຕິບັດ ວັນທີ 27 ກຸມພາ 2025, ເວລາ 06:00 ໂມງ ໃນຂອບເຂດທົ່ວປະເທດ:

ຫົວໜ່ວຍ: ກີບ/ລິດ.

| ລ/ດ | ຈຸດ | ແອັດຊັງພິເສດ | ແອັດຊັງທຳມະດາ | ກາຊວນ |
|---|---|---|---|---|
| 1 | ນະຄອນຫຼວງວຽງຈັນ | 29,650 | 23,340 | 19,370 |
| 2 | ແຂວງຜົ້ງສາລີ | 30,640 | 24,330 | 20,360 |
| 3 | ແຂວງຫຼວງນ້ຳທາ | 30,140 | 23,840 | 19,860 |
| 4 | ແຂວງອຸດົມໄຊ | 30,320 | 24,010 | 20,040 |
| 5 | ແຂວງບໍ່ແກ້ວ | 29,750 | 23,440 | 19,470 |
| 6 | ແຂວງຫຼວງພະບາງ | 30,160 | 23,850 | 19,880 |
| 7 | ແຂວງໄຊຍະບູລີ | 29,970 | 23,670 | 19,700 |
| 8 | ແຂວງຫົວພັນ | 30,150 | 23,850 | 19,880 |
| 9 | ແຂວງຊຽງຂວາງ | 29,840 | 23,530 | 19,560 |
| 10 | ແຂວງວຽງຈັນ | 29,650 | 23,340 | 19,370 |
| 11 | ແຂວງບໍລິຄຳໄຊ | 29,700 | 23,390 | 19,420 |
| 12 | ແຂວງຄຳມ່ວນ | 29,680 | 23,370 | 19,400 |
| 13 | ແຂວງສະຫວັນນະເຂດ | 29,680 | 23,370 | 19,400 |
| 14 | ແຂວງສາລະວັນ | 29,930 | 23,630 | 19,660 |
| 15 | ແຂວງຈຳປາສັກ | 29,710 | 23,400 | 19,430 |
| 16 | ແຂວງເຊກອງ | 29,930 | 23,630 | 19,660 |
| 17 | ແຂວງອັດຕະປື | 29,980 | 23,670 | 19,700 |
| 18 | ແຂວງໄຊສົມບູນ | 30,070 | 23,760 | 19,800 |

ນະຄອນຫຼວງວຽງຈັນ, ວັນທີ 26 ກຸມພາ 2025